ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0620/ກປ.05

ນະຄອນຫຼວງວຽງຈັນວັນທີ 13 JUL 2005

# ຄຳສັ່ງ

## ຂອງລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການປ້ອງກັນ ໄພອັນຕະລາຍ ຈາກ ຢາປາບສັດຕູພືດປອມ ແລະ ຢາປາບສັດຕູພືດ ທີ່ຫ້າມນຳໃຊ້ ໃນ ສ ປ ປ ລາວ.

- ອີງໃສ່ ກົດໝາຍ ວ່າດ້ວຍ ກະສິກຳ ສະບັບ ເລກທີ 01/98 ສພຊ.98, ລົງວັນທີ 10/101998.
- ອີງຕາມ ກົດລະບຽບ ການຄຸ້ມຄອງ ແລະ ນຳໃຊ້ ຢາປາບສັດຕູພືດ ຢູ່ໃນ ສ ປ ປ ລາວ. ເລກທີ 0886/ກປ, ລົງວັນທີ 10/03/2000.

ຜ່ານການຕິດຕາມກວດກາ ການນຳໃຊ້ ຢາປາບສັດຕູພືດ ແລະ ເຄມີພັນຕ່າງໆ ໃນ ສປປ ລາວ ເຫັນວ່າ ຍັງມີການນຳໃຊ້ ຢາປາບສັດຕູພືດ ປະເພດຫ້າມນຳໃຊ້ ແລະ ນອກຈາກນັ້ນ ຍັງນຳໃຊ້ ປະເພດ ຢາປາບສັດຕູພືດ ທີ່ບໍ່ໄດ້ຂຶ້ນທະບຽນ ຊຶ່ງອາດສິງໃສເປັນຢາປອມ (ຢາບໍ່ໄດ້ມາດຕະຖານ) ຊຶ່ງໃນປະຈຸບັນ ໄດ້ມີການລັກລອບ ນຳເຂົ້າຕາມຊາຍແດນຕ່າງໆ. ການນຳໃຊ້ ຢາປາບສັດຕູພືດດັ່ງກ່າວ ຈະເປັນຜົນສະທ້ອນຕໍ່ຮ່າງກາຍ ໃນໄລຍະຍາວນານ ຫຼື ໄລຍະສັ້ນ ເຊັ່ນ : ຮູ້ສຶກເຈັບຫົວ, ປັ່ນທ້ອງ, ຫັນໃຈຝືດ ກໍລະນີຮ້າຍແຮງອາດເປັນລົມ ໝົດສະຕິ. ໃນໄລຍະຍາວ ສານເຄມີດັ່ງກ່າວ ຍັງສະສົມໃນຮ່າງກາຍ ຊຶ່ງເປັນສາຍເຫດ ກໍ່ໃຫ້ເກີດ ພະຍາດມະເຮັງ, ປ່ຽນແປງພັນທຸກຳ ແລະ ເປັນພິດຕໍ່ລະບົບປະສາດ, ພ້ອມທັງມີການຕົກຄ້າງສູງ ຢູ່ກັບບັນດາພືດຜັກ ທີ່ໄດ້ນຳໃຊ້ .

ເພື່ອເປັນການປ້ອງກັນສຸຂະພາບ ຂອງຊາວກະສິກອນ ແລະ ນຳໃຊ້ຢາປາບສັດຕູພືດ ທີ່ມີຄຸນນະພາບ ແລະ ມີຄວາມຮັບປະກັນກວ່າ .

### ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ຈຶ່ງມີຄຳສັ່ງດັ່ງນີ້ :

1. ຫ້າມນຳໃຊ້ ຢາປາບສັດຕູພືດ ທີ່ມີ ພິດຮ້າຍແຮງ (ລະດັບພິດ1A), ເປັນຢາອອກລິດໄວ, ເປັນອັນຕະລາຍໂດຍກົງ ຕໍ່ສຸ ຂະພາບ ຂອງຜູ້ຊົມໃຊ້, ຕໍ່ສັດລ້ຽງ, ຕໍ່ສິ່ງແວດລ້ອມ ແລະ ມີສານພິດຕົກຄ້າງສູງ ຢູ່ໃນຜະລິດຕະພັນ ກະສິກຳ, ຢາປະເພດດັ່ງກ່າວ ມີຄື :
   - ຢາ Paration methyl ຊຶ່ງຊື່ທາງການຄ້າວ່າ : ຢາໂຟລີດອນ (FOLIDOL), ພານາດອນ (PANADON).
   - ຢາ Monocrotophos, ຊຶ່ງມີຊື່ການຄ້າວ່າ : ອາໂຊດຣິນ, ສເປໂຕ

2. ຫ້າມນຳໃຊ້ຢາ ທີ່ບໍ່ໄດ້ມາດຕະຖານ, ຢາເຊື້ອມຄຸນນະພາບ ຫຼື ຢາປອມ ຢາປາບສັດຕູພືດທີ່ຈັດຢູ່ໃນກຸ່ມນີ້ ແມ່ນຢາທີ່ບໍ່ໄດ້ຂຶ້ນທະບຽນ ຄຸ້ມຄອງນຳໃຊ້, ອາດເປັນຢາປະເພດຕ່າງໆເຊັ່ນ:
   - ຢາອາໂກຣດານ, ເອນຈອຍ, ທີໂອດານ, ຟອດສ, ເມວິນຟອດ, ຄາລາເຕ, ແລນເນດ, ເອມບູດ, ທາມາລອນ, ແມນໂກເຊັບ, ນອກທຣິນ, ມາລາໄທອອນ, ອັດສະວິນ, ມິບ, ຣີໂນຊານ, ໂຟລິແທກ ແລະ ຢາອື່ນໆອີກຫຼາຍຊະນິດ ຊຶ່ງຍັງຂາຍຊະຊາຍ ໂດຍ ບໍ່ທັນໄດ້ຮັບຮອງ ຈາກ ຫ້ອງວິໄຈ ວິຊາການກະສິກຳ.
3. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ ສົມທົບກັບ ພະແນກການ ທີ່ກ່ຽວຂ້ອງເຊັ່ນ: ພະແນກການຄ້າ ແລະ ອາກອນ ແຂວງ, ນະຄອນຫຼວງ ແລະ ເຂດພິເສດ ເປັນເຈົ້າການ ລົງສຳຫລວດຂຶ້ນບັນຊີ ຢາປາບ ສັດຕູພືດ ທີ່ມີ ແລະ ວາງຈຳໜ່າຍ ແລະ ເກັບຮັກສາໄວ້ ຢູ່ຕາມຫ້າງຮ້ານຕ່າງໆ ຢູ່ພາຍໃນ ແຂວງຕົນ. ຖ້າພົບເຫັນ ຢາປະເພດ ທີ່ຫ້າມ ນຳໃຊ້ດັ່ງກ່າວມາຂ້າງເທິງນັ້ນ ໃຫ້ຮີບໂຮມໄປທຳລາຍຖິ້ມ ຕາມຫຼັກວິຊາການ, ສ່ວນທີ່ສົງໃສວ່າເປັນຢາປອມ, ເສັຍຄຸນນະພາບ ແລະ ບໍ່ໄດ້ມາດຕະຖານ ນັ້ນ ໃຫ້ນຳໄປວິໄຈ. ຖ້າບໍ່ໄດ້ຕາມ ມາດຖານດັ່ງກ່າວນັ້ນ ກໍ່ໃຫ້ທຳລາຍຖິ້ມ, ຖ້າຫາກ ຍັງມີຄຸນນະພາບດີ ກໍໃຫ້ຢັ້ງຢືນ ຮັບຮອງ ພ້ອມທັງກ່າວເຕືອນ ຫຼື ວາງມາດຕະການແກ້ໄຂ ໃຫ້ເໝາະສົມ ໂດຍສອດຄ່ອງກັບ ລະບຽບການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດ ຢ່າງເຂັ້ມງວດ .
4. ເມື່ອໄດ້ຮັບຄຳສັ່ງສະບັບນີ້ແລ້ວ ໃຫ້ພ້ອມກັນຮີບຮ້ອນ ຈັດຕັ້ງປະຕິບັດ, ຖ້າຫາກພົບເຫັນ ບັນຫາຫຍຸ້ງຍາກ ຈົ່ງໃຫ້ລາຍງານ ມາຍັງ ກະຊວງກະສິກຳ ແລະ ປ່າໄມ້ຊາບ.

ຯ, ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ດຣ. ຕີ ພົມມະສັກ

ບ່ອນນຳສົ່ງ:

- ຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ "ເພື່ອໃຊ້ຕາງລາຍງານ" 1 ສະບັບ
- ພະແນກ ກະສິກຳ ແລະ ປ່າໄມ້ ແຂວງລະ ( ເພື່ອຈັດຕັ້ງປະຕິບັດ) 1 ສະບັບ
- ຫ້ອງການ ກະຊວງການຄ້າ, ການເງິນ ( ເພື່ອຂໍຄວາມຮ່ວມມື) 1 ສະບັບ
- ຫ້ອງການ ກະຊວງປ້ອງກັນຄວາມສະຫງົບ ( ກົມຕຳຫຼວດເສດຖະກິດ ) 1 ສະບັບ
- ຫ້ອງການ ກະຊວງສາທາລະນະສຸກ 1 ສະບັບ
- ຫ້ອງການ ກະຊວງສຶກສາ ( ເພື່ອຊາບ) 1 ສະບັບ
- ກົມປູກຝັງ ແລະ ກອງສົ່ງເສີມ ກປ ( ເພື່ອຈັດຕັ້ງປະຕິບັດ) 1 ສະບັບ
- ກົມຕ່າງໆອ້ອມຂ້າງກະຊວງ ແລະ ສະຖາບັນຄົ້ນຄວ້າ ກປ (ເພື່ອຊາບ) 1 ສະບັບ
- ເກັບມ້ຽນ 1 ສະບັບ